ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ຄະນະຜູ້ວ່າການ ທຫລ ສໍາເລັດການເຂົ້າຮ່ວມ ກອງປະຊຸມຮ່ວມ ລັດຖະມົນຕີກະຊວງການເງິນ ແລະ ຜູ້ວ່າການທະນາຄານກາງ ອາຊຽນ ຄັ້ງທີ 9 ແລະ ກອງປະຊຸມປິ່ນອ້ອມອື່ນໆ.




**ກອງປະຊຸມຮ່ວມລະດັບ ລັດຖະມົນຕີກະຊວງການເງິນ ແລະ ຜູ້ວ່າການທະນາຄານກາງ ອາຊຽນ ຄັ້ງທີ 9**

ໃນລະຫວ່າງວັນທີ 28-31 ມີນາ 2023 ທ່ານ ບຸນເຫຼືອ ສິນໄຊວໍຣະວົງ ຜູ້ວ່າການທະນາຄານແຫ່ງ ສປປ ລາວ (ທຫລ) ພ້ອມດ້ວຍຄະນະຜູ້ແທນຈາກ ທຫລ ໄດ້ສໍາເລັດການເຂົ້າຮ່ວມກອງປະຊຸມກອງປະຊຸມຮ່ວມລະດັບ ລັດຖະມົນຕີກະຊວງການເງິນ ແລະ ຜູ້ວ່າການທະນາຄານກາງ ອາຊຽນ ຄັ້ງທີ 9 ໂດຍການເປັນປະທານຂອງປະເທດ ອິນໂດເນເຊຍ ພາຍໃຕ້ຄໍາຂວັນ: "ອາຊຽນມີຄວາມສໍາຄັນ ເປັນສູນກາງແຫ່ງການພັດທະນາ (ASEAN MATTERS: EPICENTRUM OF GROWTH)" ທີ່ ບາຫຼີ, ປະເທດອິນໂດເນເຊຍ.

ກອງປະຊຸມຄັ້ງນີ້ໄດ້ຮັບຟັງການນໍາສະເໜີແລກປ່ຽນກ່ຽວກັບນະໂຍບາຍ ແລະ ທ່າອ່ຽງທາງດ້ານເສດຖະກິດ ແລະ ສາກົນ ໂດຍອົງການຈັດຕັ້ງສາກົນຄື: ອົງການການເງິນສາກົນ (IMF), ອົງການຄົ້ນຄວ້າເສດຖະກິດມະຫາພາກອາຊຽນ+3 (AMRO), ຄະນະກໍາມະການຄຸ້ມຄອງສະຖຽລະພາບທາງດ້ານການເງິນ (Financial Stability Board-FSB), ທະນາຄານຊໍາລະສາກົນ (Bank International Settlement-BIS), ທະນາຄານພັດທະນາອາຊີ (ADB) ແລະ ທະນາຄານໂລກ (World Bank) ພ້ອມທັງຮັບຟັງຄວາມຄືບໜ້າການຈັດຕັ້ງປະຕິບັດໜ້າວຽກຂອງບັນດາຄະນະກໍາມະການ (Working Committee: WC) ຕ່າງໆ ພາຍໃຕ້ວຽກງານເຊື່ອມໂຍງຂະແໜງການເງິນ-ເງິນຕາອາຊຽນ, ຮັບຮອງເອົາແຜນບູລິມະສິດຂອງ ອິນໂດເນເຊຍ ພາຍໃຕ້ 3 ຍຸດທະສາດຫຼັກຄື: ການຟື້ນຕົວຄືນໃໝ່ (Recovery-Rebuilding); ເສດຖະກິດແບບດິຈິຕອລ (Digital Economy) ແລະ ຄວາມຍືນຍົງ (Sustainability) ແລະ ແຜນບູລິມະສິດຂອງບັນດາຄະນະກໍາມະການ ປະຈໍາປີ 2023 ໂດຍສະເພາະແຜນບູລິມະສິດ (Priority Economic Deliverable-PED) ແລະ ຮັບຟັງການ

ນຳສະເໜີບັນດາຂໍ້ລິເລີ່ມໃໝ່ທີ່ຢູ່ພາຍໃຕ້ແຜນບູລິມະສິດ ປີ 2023 ຂອງອິນໂດເນເຊຍ. ພ້ອມດຽວກັນນີ້, ທ່ານຜູ້ວ່າການ ທຫລ ໄດ້ມີຄຳເຫັນຕໍ່ກອງປະຊຸມ, ໂດຍທ່ານໄດ້ຊົມເຊີຍບັນດາຄະນະກຳມະການທີ່ໄດ້ເອົາໃຈໃສ່ຜັນຂະຫຍາຍບັນດາແຜນວຽກເພື່ອສົ່ງເສີມການເຊື່ອມໂຍງການເງິນ-ເງິນຕາ ໃນພາກພື້ນ. ຊຶ່ງໄດ້ເຮັດໃຫ້ບັນດາແຜນບູລິມະສິດທີ່ໄດ້ກຳນົດໃນປີ 2022 ຜ່ານມາ ສຳເລັດຜົນຕາມຄາດໝາຍທີ່ວາງໄວ້ ແລະ ຍັງໄດ້ມີຄຳເຫັນສະໜັບສະໜູນບັນດາຂໍ້ລິເລີ່ມຂອງອາຊຽນຕິດພັນກັບການດຳເນີນທຸລະກຳສະກຸນເງິນທ້ອງຖິ່ນ ແລະ ການເຊື່ອມໂຍງລະບົບຊຳລະໃນພາກພື້ນ. ນອກຈາກນີ້, ໃນກອງປະຊຸມຍັງໄດ້ຮັບຟັງການລາຍງານຄວາມຄືບໜ້າຂອງການຈັດຕັ້ງປະຕິບັດແຜນແມ່ບົດ AEC (ASEAN Economic Community), ຄວາມຄືບໜ້າການຈັດຕັ້ງປະຕິບັດແຜນແມ່ບົດການເຊື່ອມໂຍງຂະແໜງການເງິນ-ເງິນຕາອາຊຽນ ແລະ ຂໍ້ລິເລີ່ມອື່ນໆພາຍໃຕ້ AFMGM.




**ກອງປະຊຸມລະດັບຮອງຜູ້ວ່າການທະນາຄານກາງອາຊຽນ ASEAN Central Bank Deputies Meeting (ACDM)**



**ກອງປະຊຸມສອງຝ່າຍ ລະຫວ່າງ ທຫລ ແລະ ທະນາຄານກາງ ອິນໂດເນເຊຍ (Bank Indonesia – BI)**

ຄຽງຄູ່ກັນນັ້ນ, ທຫລ ຍັງໄດ້ເຂົ້າຮ່ວມກອງປະຊຸມສອງຝ່າຍ ລະຫວ່າງ ທຫລ ແລະ ທະນາຄານກາງ ອິນໂດເນເຊຍ ໄດ້ມີການປຶກສາຫາລືກ່ຽວກັບເນື້ອໃນຂອງບົດບັນທຶກຄວາມເຂົ້າໃຈ (MOU) ລະຫວ່າງ ທຫລ ແລະ ທະນາຄານກາງ ອິນໂດເນເຊຍ ໃນການຮ່ວມມືທາງດ້ານລະບົບການຊໍາລະ, ນະວັດຕະກໍາການເງິນດິຈິຕອນ ແລະ ເພີ່ມທະວີວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ; ກອງປະຊຸມພົບປະ 2 ຝ່າຍ ລະຫວ່າງ ທຫລ ແລະ ທະນາຄານພັດທະນາອາຊີ (ADB); ກອງປະຊຸມພົບປະ 2 ຝ່າຍ ລະຫວ່າງ ທຫລ ແລະ ສະພາການຄ້າອາເມລິກາ-ອາຊຽນ (United States-ASEAN Business Committee (US-ABC)) ເພື່ອເປັນການປຶກສາຫາລືກ່ຽວກັບຄວາມຄືບໜ້າຂອງໜ້າວຽກ ແລະ ການເຈລະຈາຮ່ວມມືໃນດ້ານຕ່າງໆ.



**ກອງປະຊຸມພົບປະ 2 ຝ່າຍ ລະຫວ່າງ ທຫລ ແລະ ທະນາຄານພັດທະນາອາຊີ (ADB)**



**ກອງປະຊຸມພົບປະ 2 ຝ່າຍ ລະຫວ່າງ ທຫລ ແລະ ສະພາການຄ້າອາເມລິກາ-ອາຊຽນ (United States-ASEAN Business Committee (US-ABC))**

ນອກຈາກນີ້, ຄະນະນໍາຂອງ ທຫລ ຍັງໄດ້ເຂົ້າຮ່ວມກ່າວເປີດກອງປະຊຸມໃນກອງປະຊຸມສໍາມະນາລະດັບສູງໃນຫົວຂໍ້: "ການສົ່ງເສີມການເຂົ້າເຖິງການບໍລິການທາງດ້ານການເງິນແບບດິຈິຕອລ ແລະ ປະຊາສຶກສາສໍາລັບຈຸນລະວິສາຫະກິດ ແລະ ວິສາຫະກິດຂະໜາດນ້ອຍ ແລະ ກາງ (Promoting Digital Financial Inclusion and Literacy for MSMEs)" ຊຶ່ງ ສປປ ລາວ ໃນນາມເປັນປະທານຮ່ວມຂອງຄະນະກໍາມະການ ການເຂົ້າເຖິງການບໍລິການທາງດ້ານການເງິນຊຽນ (WC-FINC).






ກອງປະຊຸມໃນຄັ້ງນີ້ໄດ້ຮັບຜົນສໍາເລັດ ແລະ ໝາກຜົນຢ່າງຈົບງາມ ທ່າມກາງການປະກອບຄໍາເຫັນຈາກບັນດາລັດຖະມົນຕີກະຊວງການເງິນ ແລະ ຜູ້ວ່າການທະນາຄານກາງອາຊຽນ ດ້ວຍບັນຍາກາດອັນຟົດຟື້ນເພື່ອເສີມຂະຫຍາຍການຮ່ວມມືລະຫວ່າງປະເທດສະມາຊິກ ແລະ ຄູ່ຮ່ວມພັດທະນາໃນພາກພື້ນ ແລະ ສາກົນ.

**# ຂ່າວ-ພາບ: ອັນປະເສີດ ສີມບູນຂັນ.**